ທ່ານໄດ້ເຂົ້າມາຮ່ຳຮຽນຝຶກອົບຮົມທີ່ທາງອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖໄດ້ຈັດຂຶ້ນ ເພື່ອເປັນການຍົກຣະດັບຄວາມຮັບຮູ້ ແລະຄວາມອາດສາມາດຂອງພໍ່ແມ່ ໃນການດູແລ ແລະເບິ່ງແຍງລູກເຕົ້າລູກ, ຍ້ອນວ່າທ່ານ ກໍເປັນຜູ້ນຶ່ງຄືກັບພໍ່ແມ່ຫຼາຍໆຄົນ ທີ່ມີຄວາມເປັນຫ່ວງເປັນໃຍນຳລູກໆ ແລະຄອບຄົວ ແລະພ້ອມດຽວກັນນັ້ນ, ທ່ານກໍຢາກຮູ້ກ່ຽວກັບ ວິທີການລ້ຽງລູກໃນສັງຄົມອັນໃໝ່ ທີ່ກ້ວາງໃຫຍ່ໄພສານອັນນີ້, ທັງນີ້ ກໍເພື່ອເຮັດໃຫ້ຄອບຄົວຂອງທ່ານ ຫຼຸດພົ້ນຈາກພັຍພິບັດທີ່ອາດຈະເກີດມາຈາກການນຳໃຊ້ຄວາມຮຸນແຮງ, ໂດຽສະເພາະແລ້ວ ແມ່ນວິທີການເອົາໃຈໃສ່ເບິ່ງແຍງລູກເຕົ້າ ໃນຊ່ວງໄລຍະເວລາທີ່ເຂົາເຈົ້າມີອາຍຸແຕ່ 3 ປີ ຫາ 18 ປີ.

ການກໍ່ສ້າງກ້ອນກຳລັງແຮງທີ່ນຳໄປສູ່ຜົນສຳເຣັດ ຄືໃຫ້ປອດຈາກອິທິພົນຂອງຄວາມຮຸນແຮງ, ມີວາດດຳຣົງຊີວິດອັນຂາວສອາດ, ສົມບູນແບບ ແລະເຂັ້ມແຂງ, ກ່ອນອື່ນໝົດະ

1. ພໍ່ແມ່ ກໍຄືຜູ້ປົກຄອງຕ້ອງເປັນແບບຢ່າງທີ່ດີ ແລະມີຄວາມສາມາດໃນການໃຫ້ການແນະນຳ ແລະບອກສອນລູກເຕົ້າ ດ້ວຍຂໍ້ຄວາມທີ່ຈະແຈ້ງ ແລະເຂົ້າໃຈດີ.

2. ພໍ່ແມ່ຄວນສິດສອນໃຫ້ເຂົາເຈົ້າ ໄດ້ຮັບຮູ້ເຖິງຮາກຖານເຊື້ອຊາດກຳເນີດ ແລະວັທນະທັມຂອງເຂົາເຈົ້າ ຊຶ່ງມັນເປັນພື້ນຖານອັນສຳຄັນອັນນຶ່ງ ທີ່ຈະເຮັດໃຫ້ລູກໆໄດ້ ໄດ້ມີຣະບຽບວິນັຍ, ມີຄວາມເຊື່ອໝັ້ນ ແລະມີຄວາມພາກພູມໃຈຕໍ່ຕົນເອງ, ຕໍ່ຄອບຄົວ ແລະຕໍ່ປະຊາຄົມນຳອີກດ້ວຍ.

3. ຄຳເວົ້າທີ່ທ່ານນຳມາໃຊ້ກັບລູກໆ ທີ່ມີລັກສນະຄ້າຍຄືະ "ຢ່າສູ້ເຮັດແນວນີ້ອີກເດີ!", "ຣະວັງເທື່ອໜ້າ ຈະຖືກລົງໂທດຫຼືຖືກຣະບຽບ" ມັນພຽງແຕ່ເປັນຄຳເວົ້ານາບຂູ່ໃຫ້ເກີດມີການຢ້ານກົວ ເຮັດໃຫ້ເດັກຊອກຫາວິທີຫຼີກໜີຈາກຄວາມຜິດໃນຊົ່ວໄລຍະນຶ່ງເທົ່ານັ້ນ ແທນທີ່ມັນຈະເປັນການສ້າງກົດຣະບຽບຝັງໄວ້ໃນຕົວຂອງເຂົາຢ່າງຖາວອນ. ເຂົາເຈົ້າຈະບໍ່ໄດ້ຮຽນຮູ້ ແລະຮັບເອົາຄຸນຄ່າອັນສຳຄັນເຫຼົ່ານີ້ໄວ້ໃນຈິດສຳນຶກຂອງເຂົາເຈົ້າເລີຍ.



4. ທ່ານຄວນສິດສອນລູກເຕົ້າຂອງທ່ານ ເພື່ອເຮັດໃຫ້ເຂົາເຈົ້າເກີດມີຄວາມເຊື່ອໝັ້ນສູງຕໍ່ຕົນເອງ, ມີກົດຣະບຽບວິນັຍບັງຄັບຕໍ່ຕົນເອງ ແລະມີຄວາມພາກພູມໃຈຕໍ່ຕົນເອງ , ຕໍ່ຄອບຄົວ ແລະຕໍ່ສັງຄົມ. ພໍ່ແມ່ ຫຼືຜູ້ປົກຄອງ ຄວນຍົກເລື້ອງຂຶ້ນມາອະທິບາຍ ແລະໃຈ້ແຍກໃຫ້ເຫັນເຖິງຄຸນຄ່າ ແລະກຽດສັກສີຂອງລູກ ໃຫ້ລູກໆໄດ້ເຂົ້າໃຈ.

5. ທ່ານຕ້ອງຊອກຫາ ແລະມີເວລາພິເສດໃຫ້ແກ່ລູກໆ ເພາະມັນແມ່ນພື້ນຖານຕົ້ນຕໍຂອງການກໍ່ສ້າງສາຍພົວພັນອັນດີ ຣະຫວ່າງພໍ່ແມ່ກັບລູກໆ.

6. ການໄດ້ມີເວລາພິເສດໃຫ້ແກ່ລູກໆ ທ່ານຄວນເວົ້າແຕ່ສິ່ງທີ່ມ່ວນໆ ບໍ່ຄວນຕຳນິຕິຕຽນລູກໃນເວລານັ້ນ, ເພື່ອເປັນການປະຄັບປະຄອງເຮັດໃຫ້ການພົວພັນຣະຫວ່າງທ່ານເອງກັບລູກໆ ມີຄວາມປອດໃສຂຶ້ນ.

7. ເດັກນ້ອຍທີ່ມີອາຍຸແຕ່ 2 ຫາ 4 ປີ ຍັງມີຄວາມຄິດໃນຂອບເຂດອັນຈຳກັດ ແລະບໍ່ອາດຈະຈື່ຈຳ ຫຼືເຮັດໄດ້ໝົດທຸກສິ່ງຢ່າງ, ເຂົາເຈົ້າອາດຈະເຮັດໄດ້ເທື່ອລະຢ່າງ, ເພາະສະນັ້ນອີງໃສ່ສັນຊາດຍານຂອງເດັກດັ່ງກ່າວນີ້, ພໍ່ແມ່ບໍ່ຄວນໃຊ້ລູກ ຫຼືແນະນຳໃຫ້ລູກເຮັດໃນສິ່ງຕ່າງໆ ຫຼືເອົາກົດຣະບຽບບັງຄັບໃຊ້ໄປຈົນເກີນຂອບເຂດ.

8. ພໍ່ແມ່ຄວນເຂົ້າໃຈເຖິງກົດເກນແຫ່ງຄວາມຕ້ອງການ ແລະ ຄວາມຫິວຫວງຂອງເດັກ. ເຖິງແມ່ນວ່າ ເດັກນ້ອຍຜູ້ນັ້ນຈະບໍ່ຮ້ອງໄຫ້, ໃຊ້ສຽງຄ່ອຍໆ ຫຼືຢູ່ຢ່າງມິດໆ ຈະບໍ່ໄດ້ໝາຍຄວາມວ່າ ຄວາມຕ້ອງການ ຫຼືການຫິວຫວງມຢາກໄດ້ຂອງເດັກນ້ອຍຜູ້ນັ້ນ ຈະມີໜ້ອຍກ່ວາເດັກຜູ້ທີ່ໃຊ້ສຽງດັງ, ຮ້ອງໃຫ້ແຮງຄືມີການເຈັບປວດອື່ນໆ. ເດັກນ້ອຍທັງຫຼາຍມີຄວາມຢາກໄດ້ເທົ່າໆກັນ.



9. ລູກກັບມາແຕ່ໂຮງຮຽນມື້ໃດກໍຊ້າ, ແລະກໍຍັງມາຊ້າອີກຄືເກົ່າ. ມາຊ້າເທື່ອໃດພໍ່ແມ່ກໍຕີໂລດ. ວິທີການດັ່ງກ່າວບໍ່ອາດເຮັດໃຫ້ເດັກມີການປ່ຽນປງໄປໃນທາງທີ່ດີໄດ້. ພໍ່ແມ່ຄວນຄົ້ນຄ້ວາຫາວິທີແກ້ໄຂ ວິທີໃໝ່ທີ່ເຫັນວ່າເໝາະສົມ ແລະຖືກຕ້ອງ.

10. ອາຣົມໂກດຮ້າຍ ເກີດມາຈາກຄວາມໂງ່ຈ້າວຂອງຕົນເອງ ທີ່ມີເສັ້ນທາງຕັນໃນມັນສມອງ ແລະບໍ່ຮູ້ຈະຫາທາງອອກ ແລະແກ້ໄຂດ້ວຍວິທີການໃດ ຈຶ່ງສົ່ງຜົນ ແລະຣະບາຍອອກດ້ວຍຄວາມໂກດຮ້າຍ. ເຊັ່ນດຽວກັນກັບລູກບໍ່ຟັງຄວາມ ຫຼືເຮັດໃນສິ່ງທີ່ຜິດພາດໄປ, ແທນທີ່ຈະໃຫ້ການໂອ້ລົມຕັກເຕືອນໃຫ້ເຂົ້າໃຈໃນເຫດ ແລະຜົນໄດ້ຢ່າງເລິກເຊິ່ງ ພໍ່ແມ່ຈຶ່ງໃຊ້ວິທີການນາບຂູ່ ດ້ວຍການຕີລູກ ເພື່ອຫວັງໃຫ້ເຂົາເຈົ້າຢຸດເຊົາໃນການກະທຳດັ່ງກ່າວ ສນັ້ນທ່ານບໍ່ຄວນທີ່ຈະຕີລູກ.

11. ການຍ້ອງຍໍລູກ ຄວນຍ້ອງໃນບັນຫາສະເພາະ ທີ່ເຂົາເຈົ້າເຮັດໄດ້ດີ ແລະຄວນໃຫ້ການສັນຣະເສີນ ໃນທັນທີທັນໃດໂລດ.ການຍ້ອງຍໍເດັກຄວນຫຼັບເຂົ້າຫາເຂົາເຈົ້າໃກ້ໆ ເພື່ອສແດງຄວາມຈິງໃຈ ແລະໃຫ້ຄວາມອົບອຸ່ນຕໍ່ເຂົາເຈົ້າ. ນັ້ນຄືອຸປະນິສັຍທີ່ເດັກຕ້ອງການ.

12. ການຈັດວາງການໃຫ້ຮາງວັນ ຫຼືຄ່າບຳເນັດອື່ນໆຕໍ່ລູກ ຄວນເຮັດຂຶ້ນຕາມກັບຄວາມອາດສາມາດ, ກາລະເວລາ ແລະເສຖກິດຂອງພໍ່ແມ່.

13. ການກໍ່ສ້າງໃຫ້ລູກເປັນຄົນດີ ຕ້ອງອາສັຍພໍ່ແມ່,

ຄອບຄົວ, ປະຊາຄົມ, ໂຮງຮຽນ, ໂຄງການຕ່າງໆ ແລະເຈົ້າໜ້າທີ່ປົກຄອງ, ຕຳຣວດອື່ນໆພ້ອມກັນເຮັດ.

14. ເດັກນ້ອຍອາຍຸ 12-17 ປີ ມີຈິດໃຈຢາກອອກໄປທ່ຽວຂ້າງນອກເປັນພິເສດ ແລະຍັງຖືໝູ່ຄູ່ເປັນຄືຄອບຄົວຂອງຕົນເອງ, ແຕ່ຍັງຕ້ອງການເພິ່ງພາອາສັຍພໍ່ແມ່ ຫຼືຜູ້ປົກຄອງຢູ່. ສນັ້ນ, ທ່ານຕ້ອງຮູ້ວ່າເດັກນ້ອຍກໍຕ້ອງການການມີໝູ່ຄູ່, ດັ່ງນັ້ນຄວນຊອກຫາໝູ່ທີ່ດີທີ່ທ່ານຮູ້ຈັກດີໃຫ້ເຂົາເຈົ້າ ແລະພາເຂົາເຈົ້າໄປທ່ຽວຂ້າງນອກຢ່າງເໝາະສົມ.

15. ເດັກນ້ອຍ ອາຍຸແຕ່ 7-11 ປີ ມີຄວາມຕ້ອງການຢາກຈະຊັ່ງຊາຄວາມເທົ່າທຽມກັນ ຂອງຄວາມອາດສາມາດ ຂອງເຂົາເຈົ້າກັບຂອງພໍ່ແມ່.

16. ທ່ານຄວນສະແດງຕົວຂອງທ່ານອອກມາໃຫ້ພວກລູກໆໄດ້ເຫັນ ແລະຮັບຮູ້ຢ່າງຕາຍໃຈໄດ້ວ່າ ທ່ານກໍເປັນຜູ້ນຶ່ງທີ່ຮັກເຂົາເຈົ້າ.

17. ທ່ານຄວນເຮັດໃຫ້ລູກມີການເກງຂາມ ແລະຟັງຄວາມ ແລະຖືທ່ານວ່າບໍ່ເປັນໝູ່ຄູ່ກັບເຂົາເຈົ້າ.

18. ການວາງຣະບຽບການ ເພື່ອປະຕິບັດໃນຄອບຄົວ, ສິ່ງທີ່ສຳຄັນທີ່ສຸດຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກພວກລູກໆເປັນຢ່າງດີ.

**ຖ້າທ່ານມີຄວາມສົນໃຈຢາກເຂົ້າຮ່ວມສັມມະນາກ່ຽວກັບໂຄງການດັ່ງກ່າວ ກະຣຸນາຕິດຕໍ່ ແລະພົວພັນກັບອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ ຕາມເລກໂທຣ: 612.302.9048**



ສັງລວມ ຈາກເອກກະສານແບບຮຽນ ກ່ຽວກັບການຍົກຣະດັບຄວາມສາມາດຂອງພໍ່ແມ່ໃນການດູແລ ແລະເບິ່ງແຍງລູກ ໃຫ້ປອດຈາກຢາເສບຕິດ
ການຝຶກອົບຮົມພໍ່ແມ່ ທີ່ສູນວັທນະທັມລາວ
LAO America@2004

**ອົງການລາວເພື່ອຄວາມກ້າວໜ້າ ໃນສະຫະຣັຖ**
**Lao Advancement Organization of America**

Lao Cultural Center Building. 2648 West Broadway Avenue. Minneapolis, MN 55411-USA
Tel: 612.302.9048. Fax: 612.522.2431. Eamail: laoptamn@laopta.org. WWW.LAOPTA.ORG

# ພື້ນຖານ 18 ຂໍ້ ທີ່ຄວນຈຳ

# ATOD Parenting



ໃນການຍົກຣະດັບຄວາມສາມາດຂອງພໍ່ແມ່ ກ່ຽວກັບການເບິ່ງແຍງ ແລະ ດູແລລູກ ໃຫ້ປອດຈາກຢາເສບຕິດ